ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະເລຂາທິການສູນກາງພັກ

ເລກທີ 411/ຄລສພ
ນະຄອນຫຼວງວຽງຈັນ, ວັນທີ 08 ສິງຫາ 2023

# ຄຳສັ່ງ
## ວ່າດ້ວຍການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ

ເຖິງ: - ຄະນະບໍລິຫານງານພັກ, ຄະນະປະຈຳພັກ ແຂວງ-ນະຄອນຫຼວງວຽງຈັນ;
- ຄະນະບໍລິຫານງານພັກ, ຄະນະປະຈຳພັກ ກະຊວງ-ອົງການ.

- ອີງຕາມ ກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI;
- ອີງຕາມ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ XI;
- ອີງຕາມ ການຕົກລົງເຫັນດີຂອງກອງປະຊຸມຄະນະເລຂາທິການສູນກາງພັກ ຄັ້ງວັນທີ 31 ກໍລະກົດ 2023.

## ຄະນະເລຂາທິການສູນກາງພັກ ອອກຄຳສັ່ງ:

### I. ຈຸດປະສົງລະດັບຄາດໝາຍ

**1.** ເພື່ອເປັນການປັບປຸງພາຍໃນພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຮັບປະກັນການກໍ່ສ້າງພັກຕາມ 5 ຫຼັກການ ແລະ 3 ທິດນຳຂອງພັກ, ຖືກຕ້ອງຕາມກົດລະບຽບພັກ, ເພີ່ມທະວີຄວາມສາມັກຄີ, ຍົກສູງຄວາມສາມາດນຳພາ ແລະ ກຳລັງແຮງສູ້ຮົບຂອງການຈັດຕັ້ງພັກ; ເສີມຂະຫຍາຍປະຊາທິປະໄຕ, ເຊີດຊູສະຕິປັນຍາ, ຄວາມຮັບຜິດຊອບ ຂອງຄະນະພັກ ແຕ່ລະຂັ້ນ ແລະ ບັນດາອົງການຈັດຕັ້ງ ໃນລະບົບການເມືອງ;

**2.** ເພື່ອກວດກາ, ຕີລາຄາການຜັນຂະຫຍາຍນຳພາ-ຊີ້ນຳຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ກົດລະບຽບພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງລັດ ຄັ້ງທີ IX; ຕິດພັນກັບການປະຕິບັດມະຕິກອງປະຊຸມໃຫຍ່ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງທ້ອງຖິ່ນ, ຂະແໜງການ, ພ້ອມນັ້ນ, ກຳນົດທິດທາງ, ຄາດໝາຍສູ້ຊົນແຕ່ລະດ້ານ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຕໍ່ໜ້າ ຂອງຄະນະພັກ ຂັ້ນຕົນ ໃຫ້ສອດຄ່ອງກັບຄວາມເປັນຈິງ, ພາວະວິໄສ, ຮອບດ້ານ ແລະ ສາມາດຈັດຕັ້ງປະຕິບັດໄດ້;

**3.** ເພື່ອຄັດເລືອກບຸກຄະລາກອນ ທີ່ມີມາດຕະຖານ, ເງື່ອນໄຂຕາມທີ່ກຳນົດໄວ້ ປະກອບເຂົ້າໃນການຈັດຕັ້ງແຕ່ລະຂັ້ນ ໃນລະບົບການເມືອງ, ເພື່ອບຸກທະລຸການສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງວຽກງານພະນັກງານ ຂອງຂະແໜງການ, ທ້ອງຖິ່ນ, ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນໄລຍະໃໝ່ ແລະ ເພື່ອສ້າງຄວາມເຊື່ອໝັ້ນ, ສັດທາຂອງມະຫາຊົນ ຕໍ່ການນຳພາຂອງຄະນະພັກແຕ່ລະຂັ້ນ;

**4.** ເພື່ອຊຸກຍູ້ແຮງການເຄື່ອນໄຫວວຽກງານຮອບດ້ານ ໃນທົ່ວອົງຄະນະພັກ, ປຸກລະດົມສະມາຊິກພັກ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ເຂົ້າຮ່ວມພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ, ພັດທະນາທ້ອງຖິ່ນ ແລະ ຂະແໜງການຕົນ ໃຫ້ກາຍເປັນຂະບວນການກວ້າງຂວາງ, ຟົດຟື້ນ, ຕໍ່ເນື່ອງ; ຜ່ານຂະບວນການດັ່ງກ່າວ ສ້າງໄດ້ກົມກອງ, ບຸກຄົນ ທີ່ດີເດັ່ນ ໃນທຸກຂົງເຂດວຽກງານ ທັງຢູ່ສູນກາງ ແລະ ທ້ອງຖິ່ນ.

## II. ການກະກຽມໃຫ້ແກ່ການດໍາເນີນກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ

### 1. ດ້ານຂະບວນການ

ເພື່ອຮັບປະກັນຊຸກຍູ້ຂະບວນການວຽກງານຮອບດ້ານ ແລະ ສ້າງເງື່ອນໄຂ ໃຫ້ແກ່ການດໍາເນີນກອງປະຊຸມໃຫຍ່ອົງຄະນະພັກ ຂັ້ນຂອງຕົນ, ຄະນະພັກ ແຕ່ລະຂັ້ນ ຕ້ອງເອົາໃຈໃສ່ຊຸກຍູ້ ແລະ ນໍາພາບັນດາວຽກງານດັ່ງນີ້:

- ຍູ້ແຮງວຽກງານສຶກສາອົບຮົມການເມືອງແນວຄິດ ດ້ວຍຫຼາຍຮູບການ, ຫຼາຍວິທີ, ແທດເໝາະກັບແຕ່ລະເປົ້າໝາຍ ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ວຽກງານການເມືອງ-ແນວຄິດ ເຂົ້າສູ່ຄຸນນະພາບໃໝ່;
- ເອົາໃຈໃສ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຮັບປະກັນເຮັດໃຫ້ທຸກທ້ອງຖິ່ນ, ຂະແໜງການມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນເພື່ອສ້າງເງື່ອນໄຂ ໃຫ້ການພັດທະນາເສດຖະກິດ-ສັງຄົມ;
- ເອົາໃຈໃສ່ການກໍ່ສ້າງພັກ ໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຮັບປະກັນດ້ານຄຸນນະພາບ, ສ້າງໄດ້ສະມາຊິກພັກ ທີ່ດີເດັ່ນ ແລະ ເປັນແບບຢ່າງນໍາໜ້າໃຫ້ແກ່ມະຫາຊົນ;
- ເອົາໃຈໃສ່ບໍາລຸງ-ກໍ່ສ້າງພະນັກງານ ທາງດ້ານທິດສະດີ ຕິດພັນກັບພຶດຕິກໍາຕົວຈິງ, ຫັນພະນັກງານໜຸ່ມແໜ້ນ ລົງກໍ່ສ້າງຮາກຖານ ເພື່ອຮັບປະກັນເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມຮູ້, ຄວາມສາມາດ, ມີຄຸນທາດການເມືອງໜັກແໜ້ນ ແລະ ສ້າງໄດ້ພະນັກງານ ທີ່ມີມາດຕະຖານ, ເງື່ອນໄຂ ເພື່ອສືບທອດປ່ຽນແທນຢູ່ຄະນະພັກ ແຕ່ລະຂັ້ນ;
- ຊຸກຍູ້ການປະຕິບັດວຽກງານຮອບດ້ານ ຂອງທ້ອງຖິ່ນ ແລະ ຂະແໜງການ, ບຸກແຮງຂະບວນການແຂ່ງຂັນ **"ຮັກຊາດ ແລະ ພັດທະນາ"** ຕິດພັນກັບວຽກງານ 3 ສ້າງ, ການຈັດຕັ້ງປະຕິບັດ 02 ວາລະແຫ່ງຊາດ ແລະ ປະຕິບັດບັນດາຄໍາຂວັນ, ຂໍ້ແຂ່ງຂັນຂອງແຕ່ລະອົງການ ໃຫ້ກາຍເປັນຮູບປະທໍາ;
- ເອົາໃຈໃສ່ປັບປຸງກົນໄກບໍລິຫານລັດ ເພື່ອເອື້ອອໍານວຍຄວາມສະດວກໃຫ້ແກ່ປະຊາຊົນ, ເອົາໃຈໃສ່ກົນໄກການປະສານງານ ໃຫ້ມີຄວາມສະດວກ, ວ່ອງໄວ, ທັນສະໄໝ, ສາມາດກວດສອບໄດ້ ແລະ ຫັນເປັນມືອາຊີບ ເທື່ອລະກ້າວ;
- ຍູ້ແຮງການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ແລະ ຂະແໜງການ ໂດຍສະເພາະແມ່ນບັນດາຄາດໝາຍ ທີ່ໄດ້ກໍານົດໃນແຜນພັດທະນາເສດຖະກິດ-ສັງຄົມ ທີ່ປະຕິບັດຍັງບໍ່ທັນສໍາເລັດຕາມມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຮັບຮອງ;
- ເອົາໃຈໃສ່ຊຸກຍູ້ການສ້າງເສດຖະກິດຄອບຄົວ, ຍົກລະດັບຄຸນນະພາບຊີວິດການເປັນຢູ່ຂອງສະມາຊິກພັກ-ພະນັກງານ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ; ຍູ້ແຮງຂະບວນການການຜະລິດເປັນສິນຄ້າເພື່ອທົດແທນການນໍາເຂົ້າ, ສ້າງການຫັນປ່ຽນການພັດທະນາເສດຖະກິດ-ສັງຄົມ ໄປສູ່ຄຸນນະພາບໃໝ່ ຢ່າງແຂງແຮງ;
- ສ້າງຂະບວນການແຂ່ງຂັນສິລະປະວັນນະຄະດີ, ກິລາ ແບບມວນຊົນ ໃຫ້ມີບັນຍາກາດຟົດຟື້ນ, ມ່ວນຊື່ນ ໃຫ້ກາຍເປັນຂະບວນການຂອງມະຫາຊົນ ຢ່າງກວ້າງຂວາງ, ໄປຄຽງຄູ່ກັບການອອກແຮງງານ, ອະນາໄມ ແລະ ປະດັບປະດາສະຖານທີ່ໃຫ້ມີຄວາມສະອາດ, ຈົບງາມ ບົນພື້ນຖານປະຕິບັດຕາມນະໂຍບາຍປະຢັດ.

### 2. ການກະກຽມດ້ານເນື້ອໃນ

#### 2.1. ການກະກຽມລາຍງານການເມືອງ

ລາຍງານການເມືອງ ຕ້ອງສ່ອງແສງໃຫ້ເຫັນສະພາບຕົວຈິງ, ເງື່ອນໄຂ, ຈຸດພິເສດ ແລະ ໜ້າທີ່ການເມືອງຂອງອົງຄະນະພັກ ຂັ້ນຕົນ; ຕ້ານທັດສະນະລອກແບບ ແລະ ຈົດກ່າຍຈາກພາກສ່ວນອື່ນ. ໂຄງປະກອບ

ຂອງລາຍງານການເມືອງ ແບ່ງອອກເປັນ 02 ພາກຄື:

**ພາກທີ I** : ຕີລາຄາຮອບດ້ານ ຕໍ່ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງຄະນະພັກຂັ້ນຕົນ ໃນ 5 ປີຜ່ານມາ ຍົກໃຫ້ເຫັນຜົນງານທີ່ພົ້ນເດັ່ນ, ຈຸດອ່ອນຂໍ້ຄົງຄ້າງ, ສາເຫດ, ສິ່ງທ້າທາຍ ແລະ ບົດຮຽນທີ່ຖອດຖອນໄດ້ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ແຜນພັດທະນາເສດຖະກິດ-ສັງຄົມ; ການຕີລາຄາ ຕ້ອງໃຫ້ເລິກເຊິ່ງ, ພາວະວິໄສ, ກົງໄປກົງມາ ແລະ ຖືກຕ້ອງກັບສະພາບຄວາມເປັນຈິງ;

**ພາກທີ II** : ກຳນົດທິດທາງ, ໜ້າທີ່, ນະໂຍບາຍ, ກົນໄກ ແລະ ບັນດາຄາດໝາຍໃຫຍ່ ທີ່ຈະຕ້ອງຊີ້ນຳພາຈັດຕັ້ງປະຕິບັດໃນຕໍ່ໜ້າ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ໃນແຕ່ລະໄລຍະ, ວິໄສທັດ, ຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດ ແລະ ສະພາບຄວາມເປັນຈິງ ກໍຄືທ່າແຮງບົ່ມຊ້ອນຂອງທ້ອງຖິ່ນ ແລະ ຂະແໜງການ.

**2.2. ການກະກຽມແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການ**

ໂຄງປະກອບຮ່າງແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການ ປະກອບດ້ວຍ 02 ພາກຄື:

**ພາກທີ I** : ຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການຕົນ ໃນໄລຍະ 5 ປີ ຜ່ານມາ;

**ພາກທີ II** : ກຳນົດທິດທາງ, ໜ້າທີ່, ມາດຕະການ, ນະໂຍບາຍ ແລະ ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການຕົນ 5 ປີ ຕໍ່ໜ້າ ໃຫ້ສອດຄ່ອງກັບວິໄສທັດ, ຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດ, ສອດຄ່ອງກັບຄວາມສາມາດ ແລະ ທ່າແຮງບົ່ມຊ້ອນ ຂອງທ້ອງຖິ່ນ ແລະ ຂະແໜງການ; ກຳນົດທິດທາງໃນການແກ້ໄຂບັນຫາທາງດ້ານເສດຖະກິດ, ບັນຫາດ້ານການເງິນ-ເງິນຕາຕ່າງໆ ທີ່ເປັນສິ່ງກີດໜ່ວງຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ແລະ ຂະແໜງການ.

**3. ການກະກຽມດ້ານບຸກຄະລາກອນ**

**3.1. ກະກຽມບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ**

ບົດສຳຫຼວດການນຳພາລວມຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ໃຫ້ເອົາໃຈໃສ່ຕີລາຄາການນຳພາຮອບດ້ານ ເປັນຕົ້ນ: ການນຳພາດ້ານການເມືອງ; ດ້ານແນວຄິດ; ດ້ານການຈັດຕັ້ງ; ແບບແຜນນຳພາ, ວິທີເຮັດວຽກ ແລະ ການປະຕິບັດພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ ທີ່ໄດ້ຮັບການມອບໝາຍຂອງຄະນະບໍລິຫານງານພັກຕົນ ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ສາເຫດ, ບົດຮຽນທີ່ຖອດຖອນໄດ້ ໃນການນຳພາ-ຊີ້ນຳວຽກງານຮອບດ້ານຂອງຄະນະພັກ ໄລຍະ 5 ປີ ຜ່ານມາ; ພ້ອມທັງ ກຳນົດມາດຕະການ ແລະ ວິທີການແກ້ໄຂໃນຊຸມປີຕໍ່ໜ້າ **(ລະອຽດ ຈະມີຄຳແນະນຳສະເພາະ ຂອງຄະນະກວດກາສູນກາງພັກ).**

**3.2. ການດຳເນີນຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ**

- ການດຳເນີນຊີວິດການເມືອງທ້າຍສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ ແມ່ນເປັນດຳເນີນຊີວິດການເມືອງ ເພື່ອຕີລາຄາການນຳພາລວມ, ສຳຫຼວດກວດກາ, ຕີລາຄາຄວາມຮັບຜິດຊອບຂອງບຸກຄົນຄະນະພັກ ຕະຫຼອດສະໄໝຜ່ານມາ. ສະນັ້ນ, ເພື່ອຮັບປະກັນໃຫ້ການດຳເນີນຊີວິດການເມືອງ ມີຄຸນນະພາບ, ຖືກຕ້ອງຕາມຕົວຈິງ ກ່ອນອື່ນໝົດບັນດາສະຫາຍຄະນະພັກ ຕ້ອງຍົກສູງຄວາມຮັບຜິດຊອບ ຕີລາຄາການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນເອງ ຢ່າງພາວະວິໄສ, ໄປຄຽງຄູ່ກັບການຕິຊົມຕົນເອງ ແລະ ຕິຊົມເຊິ່ງກັນ ແລະ ກັນ ຢ່າງຈິງໃຈ; ພ້ອມກັນນີ້ ກໍເອົາໃຈໃສ່ກວດກາຕີລາຄາທ່ວງທີການແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງຈາກຄຳຕຳນິສິ່ງຂ່າວຕ່າງໆ ຂອງການຈັດຕັ້ງພັກ, ສະມາຊິກພັກ, ພະນັກງານ ຕໍ່ການນຳພາລວມຂອງຄະນະພັກ ແລະ ຕໍ່ແຕ່ລະສະຫາຍໃນຄະນະພັກ ໃນໄລຍະຜ່ານມາ;

- ກ່ອນການດຳເນີນຊີວິດການເມືອງທ້າຍສະໄໝ ຂອງຄະນະພັກ, ບັນດາສະຫາຍກຳມະການຄະນະພັກ ຕ້ອງໄດ້ດຳເນີນຊີວິດການເມືອງ ສຳຫຼວດກວດກາ ຢູ່ໜ່ວຍພັກ ບ່ອນຕົນຮ່ວມຊີວິດພັກ ເພື່ອໃຫ້ສະມາຊິກພັກ ແລະ ຄະນະພັກ ປະກອບຄຳເຫັນຕໍ່ຕົນເອງ.

### 3.3. ການດຳເນີນກອງປະຊຸມຄົບຄະນະບໍລິຫານງານພັກ ທ້າຍສະໄໝ

ກອງປະຊຸມຄົບຄະນະບໍລິຫານງານພັກ ທ້າຍສະໄໝ ແມ່ນເພື່ອພິຈາລະນາຕົກລົງບັນດາວຽກ ດັ່ງນີ້:

- ຮ່າງລາຍງານການເມືອງຂອງຄະນະພັກ;
- ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ຫຼື ແຜນພັດທະນາຂະແໜງການ;
- ຮ່າງປົດສຳຫຼວດການນຳພາລວມຂອງຄະນະບໍລິຫານງານພັກ;
- ແຜນຄາດຄະເນຈຳນວນບຸກຄະລາກອນ ທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະພັກ ຊຸດໃໝ່;
- ຮ່າງລາຍງານຄວາມພ້ອມດ້ານຕ່າງໆ ໃນການກະກຽມດຳເນີນກອງປະຊຸມໃຫຍ່ ຂັ້ນຕົນ;

ພາຍຫຼັງສຳເລັດກອງປະຊຸມດັ່ງກ່າວ ແມ່ນໃຫ້ລາຍງານຄວາມພ້ອມດ້ານຕ່າງໆ ແລະ ໜັງສືສະເໜີຂໍອະນຸມັດດຳເນີນກອງປະຊຸມໃຫຍ່ ຕໍ່ຄະນະພັກ ຂັ້ນເທິງ ເພື່ອໃຫ້ຄະນະພັກຂັ້ນເທິງ ພິຈາລະນາຕົກລົງ.

### 3.4. ການເລືອກເຟັ້ນບຸກຄະລາກອນ

#### 3.4.1. ທັດສະນະ ແລະ ບັນຫາທີ່ຕ້ອງເອົາໃຈໃສ່ໃນການເລືອກເຟັ້ນຜູ້ອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ.

- ຕ້ອງຮັບປະກັນ ໃຫ້ຖືກຕ້ອງຕາມມາດຕະຖານ, ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນກົດລະບຽບພັກ, ນິຕິກຳຂອງພັກ ທີ່ກ່ຽວຂ້ອງ; ໃຫ້ເອົາໃຈໃສ່ປະຫວັດຕົ້ນກຳເນີດ ແລະ ການເຄື່ອນໄຫວພົວພັນໃນສັງຄົມ;
- ໃຫ້ເອົາໃຈໃສ່ໂຄງປະກອບເພດ, ເຜົ່າ ມີຈຳນວນເພີ່ມຂຶ້ນ ຕາມຈຸດພິເສດສະເພາະ ຂອງຄະນະພັກແຕ່ລະຂັ້ນ; ຮັບປະກັນ 3 ຮຸ່ນ (ອາວຸໂສ, ກາງ, ໜຸ່ມ), ມີທັງຜູ້ເກົ່າ, ຜູ້ໃໝ່ ໃນອັດຕາສ່ວນ ທີ່ເໝາະສົມ; ໃນນັ້ນ, ຮຸ່ນກາງ ແລະ ຮຸ່ນໜຸ່ມ ໃຫ້ກວມອັດຕາສ່ວນຫຼາຍ, ສ້າງໄດ້ພະນັກງານສືບທອດປ່ຽນແທນ, ຕໍ່ເນື່ອງ ໃນສະເພາະໜ້າ, ຍາວນານ ຕາມທິດທັນເປັນໜຸ່ມ ແຕ່ຕ້ອງຮັບປະກັນຄວາມໜັກແໜ້ນທາງດ້ານການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້, ຄວາມສາມາດ ແລະ ສົມຄູ່ກັບໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ;
- ຕ້ອງຄົ້ນຄວ້າເລືອກເຟັ້ນບຸກຄົນ ທີ່ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ແລະ ເປັນຜູ້ ມີອານາຄົດ, ແຕ່ເພື່ອຮັບປະກັນໃຫ້ມີບຸກຄະລາກອນດີດັ່ງກ່າວ ຄະນະພັກ ຕ້ອງເອົາໃຈໃສ່ຄັດເລືອກພະນັກງານ, ສະມາຊິກພັກ ຈາກແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ເພື່ອທັນລົງກໍ່ສ້າງຮາກຖານ ຕິດພັນກັບວຽກງານຕົວຈິງຢູ່ຮາກຖານ, ມີການມອບໝາຍວຽກ ໃຫ້ເຮັດທີ່ຈະແຈ້ງ ແລະ ມີການຕິດຕາມກວດກາປົກກະຕິຈາກການຈັດຕັ້ງ; ພ້ອມນັ້ນ ກໍ່ສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ໄປບຳລຸງຍົກລະດັບທາງດ້ານທິດສະດີການເມືອງ ຫຼື ດ້ານວິຊາສະເພາະ;
- ໃຫ້ເລືອກເຟັ້ນຈາກຄະນະພັກ ຊຸດເກົ່າ, ເປົ້າໝາຍທີ່ຢູ່ໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະເປົ້າໝາຍອື່ນ ທີ່ມີຜົນງານພົ້ນເດັ່ນ, ຮັບປະກັນມາດຕະຖານ, ເງື່ອນໄຂ ທີ່ກຳນົດໄວ້, ແຕ່ບໍ່ຄວນຄັດເລືອກເອົາແຕ່ຄົນທ້ອງຖິ່ນ; ສຳລັບຜູ້ອອກສະໝັກຮັບເລືອກຕັ້ງເຂົ້າໃນໂຄງປະກອບຂອງຄະນະບໍລິຫານງານພັກເມືອງ-ນະຄອນ ຊຸດໃໝ່, ນອກຈາກບັນດາເປົ້າໝາຍ ທີ່ຄັດເລືອກໄດ້ຈາກຮາກຖານພັກສຳນັກງານ-ອົງການແລ້ວ, ຍັງຈະເອົາໃຈໃສ່ເລືອກເຟັ້ນເອົາຄະນະພັກຮາກຖານ ແລະ ຄະນະໜ່ວຍພັກບ້ານ ເພື່ອອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ຊຸດໃໝ່ ຕາມອັດຕາສ່ວນທີ່ເໝາະສົມ;
- ຕ້ອງປະຕິບັດຖືກຕ້ອງຕາມຫຼັກການ, ຂັ້ນຕອນ ຢ່າງເຂັ້ມງວດ, ພາວະວິໄສ, ເສີມຂະຫຍາຍປະຊາທິປະໄຕຂອງພະນັກງານ-ສະມາຊິກພັກ, ສະຕິປັນຍາລວມຂອງໝູ່ຄະນະ ໂດຍຜ່ານການຄົ້ນຄວ້າ ແລະ ຕົກລົງເປັນເອກະພາບຂອງຄະນະປະຈຳພັກ ຫຼື ຄະນະບໍລິຫານງານພັກ (ບ່ອນທີ່ບໍ່ມີຄະນະປະຈຳພັກ);
- ຜູ້ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ຊຸດໃໝ່ ແຕ່ລະຂັ້ນ ຕ້ອງໄດ້ຜ່ານ

ການທາບທາມຄຳເຫັນສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງ ດັ່ງນີ້:

+ ອົງຄະນະພັກ ທີ່ດຳເນີນກອງປະຊຸມໃຫຍ່ຜູ້ແທນ ຕ້ອງໄດ້ຜ່ານການທາບທາມຄຳເຫັນຂອງສະມາຊິກພັກ ແລະ ພະນັກງານຫຼັກແຫຼ່ງ **3 ຮອບ**;

+ ອົງຄະນະພັກ ແລະ ຮາກຖານພັກ ທີ່ດຳເນີນກອງປະຊຸມໃຫຍ່ສະມາຊິກພັກ ຕ້ອງໄດ້ຜ່ານການທາບທາມຄຳເຫັນຂອງສະມາຊິກພັກ **2 ຮອບ**;

**(ລະອຽດ ແມ່ນຈະມີຄຳແນະນຳສະເພາະ).**

**3.4.2. ມາດຕະຖານ**

ມາດຕະຖານຄະນະບໍລິຫານງານພັກ, ຄະນະປະຈຳພັກ, ເລຂາ, ຮອງເລຂາ, ປະທານ, ຮອງປະທານຄະນະກວດກາພັກ ແຕ່ລະຂັ້ນ ແມ່ນໃຫ້ປະຕິບັດຕາມມາດຕະຖານລວມ ແລະ ມາດຕະຖານສະເພາະ ຂອງຄະນະບໍລິຫານງານພັກ ທີ່ໄດ້ກຳນົດໄວ້ໃນກົດລະບຽບພັກ ສະໄໝທີ XI ມາດຕາ 12 ຂໍ້ 2; ມະຕິກົມການເມືອງສູນກາງພັກ ສະບັບເລກທີ 030/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍມາດຕະຖານຂອງພະນັກງານນຳພາ-ຄຸ້ມຄອງ ມາດຕາ 3, 5, 7, 10, 12;

ສຳລັບມາດຕະຖານຂອງຄະນະກວດກາພັກ ແຕ່ລະຂັ້ນ ນອກຈາກທີ່ໄດ້ກຳນົດຢູ່ໃນມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 030 ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການກວດກາລັດ ສະບັບເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022 (ສະບັບປັບປຸງ ປີ 2022) ມາດຕາ 65 ແລະ 66; ຄຳແນະນຳ ຂອງຄະນະກວດກາສູນກາງພັກ ສະບັບເລກທີ 192/ຄກສພ, ລົງວັນທີ 26 ມິຖຸນາ 2017 ກ່ຽວກັບການປັບປຸງການຈັດຕັ້ງຄະນະກວດກາພັກ, ອົງການກວດກາລັດກະຊວງ-ອົງການ ແລະ ທ້ອງຖິ່ນ (ສະບັບປັບປຸງ) ແລະ ບົນພື້ນຖານການຕົກລົງເຫັນດີ ຈາກຄະນະພັກຂັ້ນເທິງ.

**3.4.3. ເປົ້າໝາຍ, ເງື່ອນໄຂດ້ານອາຍຸພັກ ແລະ ອາຍຸກະສຽນ**

**❖ ເປົ້າໝາຍ**

ເປົ້າໝາຍທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ແຕ່ລະຂັ້ນ ແມ່ນໃຫ້ຄົ້ນຄວ້າເລືອກເຟັ້ນຈາກຄະນະບໍລິຫານງານພັກ ຊຸດເກົ່າ, ເປົ້າໝາຍທີ່ຢູ່ໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ແລະ ເປົ້າໝາຍອື່ນ ທີ່ມີຜົນງານພົ້ນເດັ່ນໃນການປະຕິບັດໜ້າທີ່ວຽກງານ, ຮັບປະກັນມາດຕະຖານ, ເງື່ອນໄຂ ທີ່ກຳນົດໄວ້; ເຊິ່ງແຕ່ລະເປົ້າໝາຍແມ່ນມີຕຳແໜ່ງພັກ ຫຼື ຕຳແໜ່ງບໍລິຫານລັດ ຖັດລົງມາ 1-2 ຂັ້ນ.

**❖ ເງື່ອນໄຂດ້ານອາຍຸພັກ ແລະ ອາຍຸກະສຽນ:**

- ອາຍຸພັກສົມບູນ: ຜູ້ທີ່ຈະເອົາເຂົ້າສະໝັກຄະນະບໍລິຫານງານພັກແຂວງ-ນະຄອນຫຼວງ, ກະຊວງ-ອົງການ ຕ້ອງມີອາຍຸພັກ 7 ປີ ຂຶ້ນໄປ; ຜູ້ທີ່ຈະເອົາເຂົ້າສະໝັກຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ ຕ້ອງມີອາຍຸພັກສົມບູນ 5 ປີ ຂຶ້ນໄປ ແລະ ຜູ້ທີ່ຈະເອົາເຂົ້າສະໝັກຄະນະພັກຮາກຖານ, ຄະນະໜ່ວຍພັກ ຕ້ອງມີອາຍຸພັກສົມບູນ 3 ປີ ຂຶ້ນໄປ;
- ເພື່ອຮັບປະກັນລັກສະນະສືບທອດປ່ຽນແທນ, ຕໍ່ເນື່ອງ ໃນສະເພາະໜ້າ, ຍາວນານ ແລະ ຫັນເປັນໜຸ່ມເທື່ອລະກ້າວ ຈຶ່ງໄດ້ກຳນົດເງື່ອນໄຂດ້ານອາຍຸກະສຽນຂອງຜູ້ຈະອອກສະໝັກເຂົ້າໃນຄະນະພັກ ແຕ່ລະຂັ້ນ ດັ່ງນີ້:

**1). ແຂວງ-ນະຄອນຫຼວງວຽງຈັນ, ກະຊວງ-ອົງການ**

- ຄະນະບໍລິຫານງານພັກ ຊຸດເກົ່າ:
  + ເລຂາຄະນະພັກ ທີ່ເປັນກຳມະການສູນກາງພັກ: ອາຍຸບໍ່ເກີນ 64 ປີ, 6 ເດືອນ;
  + ເລຂາຄະນະພັກ ທີ່ບໍ່ແມ່ນກຳມະການສູນກາງພັກ: ອາຍຸບໍ່ເກີນ 59 ປີ, 6 ເດືອນ;
  + ຄະນະປະຈຳພັກ ຈະສືບຕໍ່ສະໝັກ: ອາຍຸບໍ່ເກີນ 59 ປີ;
  + ກຳມະການຄະນະພັກ ຈະສືບຕໍ່ສະໝັກ: ອາຍຸບໍ່ເກີນ 58 ປີ;
- ຜູ້ສະໝັກໃໝ່: ອາຍຸບໍ່ເກີນ 55 ປີ.

**2). ເມືອງ-ນະຄອນ ແລະ ທຽບເທົ່າ**

- ຄະນະບໍລິຫານງານພັກ ຊຸດເກົ່າ:
  + ເລຂາຄະນະພັກ ທີ່ເປັນກຳມະການພັກແຂວງ-ນະຄອນຫຼວງວຽງຈັນ: ອາຍຸບໍ່ເກີນ 57 ປີ, 6 ເດືອນ;
  + ກຳມະການປະຈຳພັກ, ກຳມະການຄະນະພັກ ຈະສືບຕໍ່ສະໝັກ: ອາຍຸບໍ່ເກີນ 57 ປີ;
- ຜູ້ສະໝັກໃໝ່: ອາຍຸບໍ່ເກີນ 55 ປີ.

**3). ຮາກຖານພັກອ້ອມຂ້າງກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ, ເມືອງ-ນະຄອນ ແລະ ທຽບເທົ່າ**

- ຄະນະບໍລິຫານງານພັກ ຊຸດເກົ່າ ຈະສືບຕໍ່ສະໝັກ: ອາຍຸບໍ່ເກີນ 57 ປີ;
- ຜູ້ສະໝັກໃໝ່: ອາຍຸບໍ່ເກີນ 55 ປີ;

ກໍລະນີຜູ້ຈະອອກສະໝັກຮັບເລືອກຕັ້ງ ເຂົ້າໃນໂຄງປະກອບຄະນະບໍລິຫານງານພັກ ທີ່ກ່າວມາຂ້າງເທິງນັ້ນ ຫາກມີອາຍຸກະສຽນເກີນ ຕາມທີ່ກຳນົດໄວ້, ແຕ່ມີຄວາມຈຳເປັນ ແມ່ນນຳສະເໜີຕໍ່ຄະນະພັກຂັ້ນເທິງ ຖັດຄືນ ເປັນຜູ້ພິຈາລະນາຕົກລົງ.

**4). ຮາກຖານພັກບ້ານ**

ເລຂາຮາກຖານພັກບ້ານ ດ້ານອາຍຸກະສຽນ ແມ່ນບໍ່ໄດ້ກຳນົດ, ແຕ່ຕ້ອງຮັບປະກັນມາດຕະຖານດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ມີບົດບາດ ແລະ ໄດ້ຮັບຄວາມເຊື່ອຖື, ໄວ້ວາງໃຈຈາກສະມາຊິກພັກ, ມະຫາຊົນ ແລະ ມີສຸຂະພາບດີ; ພ້ອມນັ້ນ, ຄະນະພັກ ແຕ່ລະຂັ້ນ ຕ້ອງເອົາໃຈໃສ່ສ້າງພະນັກງານສືບທອດປ່ຽນແທນ ຂັ້ນບ້ານ ໃຫ້ທັນເປັນໜຸ່ມ ເທື່ອລະກ້າວ.

**3.5. ການກຳນົດຈຳນວນຄະນະບໍລິຫານງານພັກ ແຕ່ລະຂັ້ນ**

**1). ການກຳນົດຈຳນວນຄະນະບໍລິຫານງານພັກ**

ຈຳນວນຄະນະບໍລິຫານງານພັກ ຂັ້ນໃດ ແມ່ນກອງປະຊຸມຄົບຄະນະບໍລິຫານງານພັກ ຂັ້ນນັ້ນ ເປັນຜູ້ຄົ້ນຄວ້າ ບົນພື້ນຖານໂຄງປະກອບກົງຈັກການຈັດຕັ້ງ, ຈຳນວນສະມາຊິກພັກ, ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ອີງຕາມສະພາບຄວາມເປັນຈິງ ຂອງຖັນແຖວພະນັກງານ, ສະມາຊິກພັກ ທີ່ຈະອອກສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກ ຂັ້ນຕົນ, ເພື່ອນຳສະເໜີຄະນະພັກ ຂັ້ນເທິງ ຖັດຄືນ ພິຈາລະນາຕົກລົງ;

ເພື່ອເປັນບ່ອນອີງ ໃຫ້ຄະນະບໍລິຫານງານພັກ ແຕ່ລະຂັ້ນ ຈຶ່ງໄດ້ກຳນົດຂອບເຂດດ້ານຈຳນວນລະອຽດດັ່ງນີ້:

- ຄະນະບໍລິຫານງານພັກ ແຂວງ, ນະຄອນຫຼວງວຽງຈັນ ປະກອບແຕ່ 27 - 41 ສະຫາຍ;
- ຄະນະບໍລິຫານງານພັກກະຊວງ-ອົງການ ປະກອບແຕ່ 07 - 27 ສະຫາຍ;
- ຄະນະບໍລິຫານງານພັກ ກະຊວງປ້ອງກັນປະເທດ ປະກອບແຕ່ 27 - 35 ສະຫາຍ ແລະ ກະຊວງປ້ອງກັນຄວາມສະຫງົບ ປະກອບແຕ່ 25 - 29 ສະຫາຍ;
- ຄະນະບໍລິຫານງານພັກເມືອງ-ນະຄອນ ແລະ ທຽບເທົ່າ ປະກອບແຕ່ 19 - 27 ສະຫາຍ;
- ຄະນະພັກຮາກຖານ ປະກອບແຕ່ 05 - 09 ສະຫາຍ; ຄະນະໜ່ວຍພັກ ປະກອບແຕ່ 03 - 05 ສະຫາຍ;
- ສຳລັບໜ່ວຍພັກ ທີ່ມີສະມາຊິກພັກສົມບູນ ບໍ່ເຖິງ 09 ສະຫາຍ ໃຫ້ປະກອບແຕ່ເລຂາ, ຮອງເລຂາໜ່ວຍພັກ.

**2). ການກຳນົດຈຳນວນຄະນະປະຈຳພັກ**

ຄະນະບໍລິຫານງານພັກໃດ ທີ່ມີຈຳນວນກຳມະການຄະນະພັກ ແຕ່ 09 ສະຫາຍ ຂຶ້ນໄປ ຈຶ່ງໃຫ້ມີຄະນະປະຈຳພັກ, ແຕ່ຈຳນວນຄະນະປະຈຳພັກ ບໍ່ໃຫ້ເກີນ 1/3 ຂອງຈຳນວນຄະນະບໍລິຫານງານພັກ ຂັ້ນນັ້ນ.

**3.6. ການເລືອກຕັ້ງ**

- ຄະນະບໍລິຫານງານພັກ ແຕ່ລະຂັ້ນ ແມ່ນກອງປະຊຸມໃຫຍ່ຜູ້ແທນ ຫຼື ກອງປະຊຸມໃຫຍ່ສະມາຊິກພັກ

ຂັ້ນນັ້ນ ເລືອກຕັ້ງດ້ວຍຮູບການປ່ອນບັດລົງຄະແນນສຽງໂດຍກົງ, ປິດລັບ;

- ຄະນະປະຈຳພັກ ແມ່ນກອງປະຊຸມຄົ້ງປະຖົມມະລຶກຂອງຄະນະບໍລິຫານງານພັກ ຂັ້ນນັ້ນ ເລືອກຕັ້ງດ້ວຍຮູບການປ່ອນບັດລົງຄະແນນສຽງໂດຍກົງ, ປິດລັບ;

- ເລຂາ ແລະ ຮອງເລຂາຄະນະພັກ ແມ່ນກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານພັກ ຂັ້ນນັ້ນ ເລືອກຕັ້ງດ້ວຍຮູບການລົງປະຊາມະຕິຮັບຮອງເອົາ ແລະ ຕ້ອງແມ່ນຜູ້ທີ່ໄດ້ຮັບຄວາມເຊື່ອໝັ້ນ, ໄວ້ວາງໃຈ ຈາກຄະນະບໍລິຫານງານພັກ ຂັ້ນນັ້ນ;

- ປະທານ ແລະ ຮອງປະທານຄະນະກວດກາພັກ ແມ່ນກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານພັກ ຂັ້ນນັ້ນ ເລືອກຕັ້ງດ້ວຍຮູບການປ່ອນບັດລົງຄະແນນສຽງໂດຍກົງ, ປິດລັບ.

**3.7. ການກະກຽມຜູ້ແທນສົມບູນ ແລະ ສຳຮອງ ເຂົ້າຮ່ວມກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ**

**1). ມາດຕະຖານ ຂອງຜູ້ແທນສົມບູນ ແລະ ສຳຮອງ**

- **ດ້ານຄຸນທາດການເມືອງ**: ຕ້ອງແມ່ນຜູ້ທີ່ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຮັບຜິດຊອບການເມືອງສູງ, ເປັນຜູ້ທີ່ດີເດັ່ນ, ເປັນແບບຢ່າງນຳໜ້າ ໃນການປະຕິບັດໜ້າທີ່ການເມືອງ ທີ່ໄດ້ຮັບຜິດຊອບ; ເປັນຜູ້ທີ່ມີບົດບາດ, ໄດ້ຮັບຄວາມເຊື່ອໝັ້ນໄວ້ວາງໃຈ ຈາກຖັນແຖວສະມາຊິກພັກ-ພະນັກງານ, ມີສະຕິຕໍ່ການຈັດຕັ້ງ, ຕໍ່ລະບຽບວິໄນ, ມີຄວາມຮັບຜິດຊອບສູງ ແລະ ເປັນເຈົ້າການໃນການຄົ້ນຄວ້າພິຈາລະນາບັນຫາຕ່າງໆ ຂອງກອງປະຊຸມ;

- **ດ້ານຄວາມຮູ້-ຄວາມສາມາດ**: ແມ່ນຜູ້ທີ່ມີຄວາມຮູ້ທາງດ້ານທິດສະດີ, ວິທະຍາສາດໃດໜຶ່ງ ທີ່ແນ່ນອນ ແລະ ມີຄວາມສາມາດໃນການຄົ້ນຄວ້າປະກອບຄຳເຫັນ ແລະ ຕົກລົງຕໍ່ບັນຫາຕ່າງໆໃນກອງປະຊຸມໃຫຍ່, ສາມາດກຳແໜ້ນມະຕິກອງປະຊຸມໃຫຍ່ ທີ່ໄດ້ຮັບຮອງ ເພື່ອນຳໄປເຜີຍແຜ່ ແລະ ຈັດຕັ້ງຜັນຂະຫຍາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

- **ດ້ານສຸຂະພາບ**: ຕ້ອງມີສຸຂະພາບແຂງແຮງດີ, ສາມາດເຂົ້າຮ່ວມກອງປະຊຸມໃຫຍ່ ຈົນສຳເລັດ. ພ້ອມນັ້ນ ກໍຕ້ອງແມ່ນຜູ້ທີ່ສາມາດສືບຕໍ່ປະຕິບັດໜ້າທີ່ວຽກງານ ຕ່ຳສຸດເຄິ່ງສະໄໝ ຫຼື 30 ເດືອນ ຂຶ້ນໄປ.

**2). ເງື່ອນໄຂຜູ້ແທນສົມບູນ ແລະ ສຳຮອງ**

- ຜູ້ແທນສົມບູນ ແລະ ສຳຮອງ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຄະນະພັກ ຂັ້ນເທິງ ຕ້ອງໄດ້ຮັບການເລືອກຕັ້ງຈາກກອງປະຊຸມໃຫຍ່ຂັ້ນຕົນ ເຊິ່ງໄດ້ຮັບຄະແນນສຽງແຕ່ 50 % ຂຶ້ນໄປ; ການບົ່ງຕົວແຕ່ງຕັ້ງເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ ຂອງອົງຄະນະພັກ ຂັ້ນເທິງ ໃຫ້ປະຕິບັດໄດ້ສະເພາະແຕ່ການຈັດຕັ້ງພັກ ທີ່ບໍ່ສາມາດດຳເນີນກອງປະຊຸມໃຫຍ່ ຂັ້ນຂອງຕົນໄດ້;

- ກໍລະນີຈຳເປັນ ຄະນະພັກຂັ້ນຮຽກໄຮມກອງປະຊຸມໃຫຍ່ ມີສິດບົ່ງຕົວແຕ່ງຕັ້ງເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ຂັ້ນຕົນໄດ້, ແຕ່ຕ້ອງລາຍງານໃຫ້ຄະນະພັກຂັ້ນເທິງ ຖັດຕົນ ຮັບຊາບ.

**3). ຂໍ້ຫ້າມຂອງຜູ້ແທນສົມບູນ ແລະ ສຳຮອງ**

- ຫ້າມການເຄື່ອນໄຫວທີ່ມີລັກສະນະແຕະຕ້ອງເຖິງລະບຽບການດຳເນີນກອງປະຊຸມທາບທາມ ແລະ ການດຳເນີນກອງປະຊຸມໃຫຍ່, ໂດຍສະເພາະຕໍ່ລະບຽບການເລືອກຕັ້ງ;

- ຫ້າມການກະທຳທີ່ບິດເບືອນແນວທາງ, ນະໂຍບາຍ ແລະ ຄວາມເປັນຈິງກ່ຽວກັບການເລືອກຕັ້ງ;

- ຫ້າມໂຄສະນາ, ເຜີຍແຜ່, ໃຫ້ຂໍ້ມູນ, ໃສ່ຮ້າຍປ້າຍສີ, ທັບຖົມ ຜູ້ອອກສະໝັກຮັບເລືອກຕັ້ງ;

- ຫ້າມປັ່ນປ່ວນ, ສ້າງສະຖານະການ ກໍ່ຄວາມບໍ່ສະຫງົບ ໃນເວລາດຳເນີນການທາບທາມ ແລະ ເລືອກຕັ້ງ;

- ຫ້າມຮັບ ຫຼື ໃຫ້ ສິນບົນ, ຊື້ຈ້າງ, ຈອບອອຍ ແກ່ບຸກຄົນອື່ນ ດ້ວຍຮູບການຕ່າງໆ ທີ່ພົວພັນເຖິງການລົງຄະແນນສຽງຕໍ່ການທາບທາມ ແລະ ການເລືອກຕັ້ງ;

- ຫ້າມຈົດກ່າຍ, ຖ່າຍພາບບັດທາບທາມ ຫຼື ບັດເລືອກຕັ້ງ ເພື່ອສົ່ງໃຫ້ບຸກຄົນອື່ນ ຢູ່ພາຍໃນ ຫຼື ພາຍນອກ

ກອງປະຊຸມ ໃນເວລາທາບທາມ ແລະ ເລືອກຕັ້ງ; ຫ້າມມີອັກຄະຕິ ຕໍ່ຜູ້ອອກສະໝັກເລືອກຕັ້ງ ຫຼື ຜູ້ອອກທາບທາມ;

- ຫ້າມສົນທະນາແລກປ່ຽນຄຳຄິດເຫັນກັບຄົນອື່ນ ໂດຍກົງ ຫຼື ໃຊ້ໂທລະສັບ ຕິດຕໍ່ຫາກັນ;
- ຫ້າມຫຍຸ້ງກ່ຽວ, ບັງຄັບ, ນາບຂູ່, ຊອກຊູ້, ສອບຖາມຜົນຄະແນນຂອງຕົນເອງ ຫຼື ຄະແນນບຸກຄົນໃດໜຶ່ງນຳຄະນະຮັບຜິດຊອບ;
- ຫ້າມມີພຶດຕິກຳອື່ນໆ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**4). ການກຳນົດຈຳນວນຜູ້ແທນ**

ການກຳນົດຈຳນວນຜູ້ແທນສົມບູນ, ສຳຮອງ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຂອງພັກ ຂັ້ນໃດ ແມ່ນສິດຂອງຄະນະບໍລິຫານງານພັກ ຂັ້ນນັ້ນ ເປັນຜູ້ກຳນົດ; ຄະນະປະຈຳພັກ ເປັນຜູ້ຕົກລົງແບ່ງປັນຈຳນວນຜູ້ແທນໃຫ້ຄະນະພັກ ຂັ້ນລຸ່ມ ເພື່ອດຳເນີນການປ່ອນບັດເລືອກຕັ້ງຕາມຫຼັກການສະເໜີພາບ, ລົງຄະແນນສຽງໂດຍກົງປິດລັບ; ເຊິ່ງການກຳນົດຈຳນວນຜູ້ແທນ ແມ່ນໃຫ້ອີງໃສ່ຈຳນວນການຈັດຕັ້ງພັກ ທີ່ຂຶ້ນກັບຄະນະພັກ ຂັ້ນຕົນ;

ການເພີ່ມຂຶ້ນ ຂອງຈຳນວນຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ອົງຄະນະພັກ ແຕ່ລະຂັ້ນ ບໍ່ໃຫ້ເກີນ 10% ຂອງຈຳນວນຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ ສະໄໝຜ່ານມາ.

**5). ການສິ້ນສຸດເປັນຜູ້ແທນສົມບູນ ແລະ ສຳຮອງ**

ເງື່ອນໄຂການສິ້ນສຸດ ເປັນຜູ້ແທນສົມບູນ ແລະ ສຳຮອງ ມີດັ່ງນີ້:

- ເສຍຊີວິດ;
- ລາອອກຈາກລັດຖະກອນ ແລະ ອອກພັກການຮັບອຸດໜູນບຳນານ;
- ຖືກລົງວິໄນຂັ້ນປົດຕຳແໜ່ງຂຶ້ນໄປ;
- ພວມຖືກດຳເນີນຄະດີ ສະຖານການກະທຳຜິດທາງອາຍາ ຫຼື ຖືກສານຕັດສິນລົງໂທດ;
- ຖືກຍົກຍ້າຍຈາກອົງຄະນະພັກ ທີ່ໄດ້ຮັບການເລືອກຕັ້ງເປັນຜູ້ແທນ ໄປຮັບໜ້າທີ່ໃໝ່ ຢູ່ອົງຄະນະພັກ ອື່ນ;
- ຖືກໄປຮຽນ ຫຼື ໄປປະຕິບັດໜ້າທີ່ຢູ່ບ່ອນອື່ນ 06 ເດືອນ ຂຶ້ນໄປ;
- ກໍລະນີອື່ນໆ ທີ່ລະເມີດຕໍ່ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຕ່າງໆ.

**6). ແຂກຖືກເຊີນ**

ຈຳນວນ ແລະ ເປົ້າໝາຍແຂກຖືກເຊີນ ເຂົ້າຮ່ວມກອງປະຊຸມໃຫຍ່ພັກ ຂັ້ນໃດ ແມ່ນໃຫ້ຄະນະພັກ ຂັ້ນນັ້ນເປັນຜູ້ຕົກລົງ ໂດຍອີງໃສ່ເງື່ອນໄຂດ້ານສະຖານທີ່ ແລະ ຄວາມສາມາດດ້ານງົບປະມານ.

## III. ກອງປະຊຸມໃຫຍ່ ແລະ ໄລຍະເວລາດຳເນີນກອງປະຊຸມໃຫຍ່ຄະນະພັກ ແຕ່ລະຂັ້ນ

### 1. ກອງປະຊຸມໃຫຍ່ຜູ້ແທນ ແລະ ກອງປະຊຸມໃຫຍ່ສະມາຊິກພັກ

- **ກອງປະຊຸມໃຫຍ່ຜູ້ແທນ:** ອົງຄະນະພັກ, ຮາກຖານພັກໃດ ທີ່ມີຈຳນວນສະມາຊິກພັກ ຫຼາຍກວ່າ 200 ສະຫາຍ ຂຶ້ນໄປ ແມ່ນໃຫ້ດຳເນີນກອງປະຊຸມໃຫຍ່ຜູ້ແທນ;

- **ກອງປະຊຸມໃຫຍ່ສະມາຊິກພັກ:** ອົງຄະນະພັກ, ຮາກຖານພັກໃດ ມີສະມາຊິກພັກ 200 ສະຫາຍ ລົງມາແມ່ນໃຫ້ດຳເນີນກອງປະຊຸມໃຫຍ່ສະມາຊິກພັກ;

ກໍລະນີຄວາມຈຳເປັນ ກໍສາມາດດຳເນີນກອງປະຊຸມໃຫຍ່ຜູ້ແທນ ຫຼື ກອງປະຊຸມໃຫຍ່ສະມາຊິກພັກ ໄດ້, ແຕ່ຕ້ອງສະເໜີ ແລະ ໄດ້ຮັບຄວາມເຫັນດີຈາກຄະນະພັກ ຂັ້ນເທິງ.

### 2. ໄລຍະເວລາດຳເນີນກອງປະຊຸມໃຫຍ່

- ອົງຄະນະພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ: ໃຫ້ສຳເລັດກອງປະຊຸມໃຫຍ່ ຂັ້ນຂອງຕົນ ບໍ່ໃຫ້ກາຍ ເດືອນກັນຍາ **( 9 ) ປີ 2025;** ສຳລັບອົງຄະນະພັກກະຊວງ-ອົງການ ທີ່ດຳເນີນກອງປະຊຸມໃຫຍ່ ຫຼັງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ກໍໃຫ້ດຳເນີນກອງປະຊຸມໃຫຍ່ອົງຄະນະພັກຂັ້ນຕົນ

ສຳເລັດຕາມກຳນົດເວລາດັ່ງກ່າວ;

- ອົງຄະນະພັກຈຳນວນໜຶ່ງ ແມ່ນຈະໄດ້ດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ ຫຼັງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ (ລະອຽດ ຈະມີຄຳແນະນຳສະເພາະ);

- ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກ ອ້ອມຂ້າງແຂວງ-ນະຄອນຫຼວງ ແລະ ຮາກຖານພັກອ້ອມຂ້າງກະຊວງ-ອົງການ: ໃຫ້ສຳເລັດກອງປະຊຸມໃຫຍ່ ບໍ່ໃຫ້ກາຍ **ເດືອນມີນາ ( 3 ) ປີ 2025**;

- ຮາກຖານພັກອ້ອມຂ້າງເມືອງ-ນະຄອນ ແລະ ຮາກຖານພັກບ້ານ: ໃຫ້ສຳເລັດກອງປະຊຸມໃຫຍ່ ບໍ່ໃຫ້ກາຍ **ເດືອນກັນຍາ ( 9 ) ປີ 2024**;

ຄະນະພັກແຕ່ລະຂັ້ນ ຕ້ອງດຳເນີນກອງປະຊຸມໃຫຍ່ຂັ້ນຕົນ ສຳເລັດກ່ອນກອງປະຊຸມໃຫຍ່ຄະນະພັກຂັ້ນເທິງ ຖັດຕົນ ບໍ່ໃຫ້ເກີນ 06 ເດືອນ.

### 3. ກຳນົດເວລາດຳເນີນກອງປະຊຸມໃຫຍ່ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ

- ກອງປະຊຸມໃຫຍ່ອົງຄະນະພັກ ກະຊວງ-ອົງການ ໃຊ້ເວລາ 01 - 02 ວັນ;
- ກອງປະຊຸມໃຫຍ່ອົງຄະນະພັກ ແຂວງ ແລະ ນະຄອນຫຼວງ ໃຊ້ເວລາ 02 - 03 ວັນ;
- ກອງປະຊຸມໃຫຍ່ອົງຄະນະພັກ ເມືອງ-ນະຄອນ ແລະ ທຽບເທົ່າ ໃຊ້ເວລາ 01 ວັນເຄິ່ງ - 02 ວັນ;
- ກອງປະຊຸມໃຫຍ່ຮາກຖານພັກ ໃຊ້ເວລາ 01 ວັນ.

## IV. ວິທີການຈັດຕັ້ງປະຕິບັດ

**1.** ຄະນະເລຂາທິການສູນກາງພັກ ເປັນຜູ້ຊີ້ນຳໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້;

**2.** ມອບໃຫ້ບັນດາອົງການເສນາທິການຂັ້ນສູນກາງ ອອກຄຳແນະນຳກ່ຽວກັບການປະຕິບັດຄຳສັ່ງສະບັບນີ້ ດັ່ງນີ້:

- ຄະນະຈັດຕັ້ງສູນກາງພັກ ອອກຄຳແນະນຳການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້, ພ້ອມທັງເຮັດໜ້າທີ່ລົງຕິດຕາມ, ຊຸກຍູ້ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂອງຄະນະພັກ ແຕ່ລະຂັ້ນ, ໂດຍສະເພາະການກະກຽມດ້ານບຸກຄະລາກອນ; ຊຸກຍູ້, ຕິດຕາມການອະນຸມັດງົບປະມານຈາກກະຊວງການເງິນ ໃຫ້ແກ່ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ;

- ຄະນະກວດກາສູນກາງພັກ ອອກຄຳແນະນຳ ກ່ຽວກັບການດຳເນີນຊີວິດການເມືອງ, ໂຄງຮ່າງບົດສຳຫຼວດການນຳພາລວມ ຂອງຄະນະພັກ ແຕ່ລະຂັ້ນ ແລະ ໂຄງຮ່າງບົດສຳຫຼວດບຸກຄົນໃນຄະນະພັກ, ສະມາຊິກພັກ;

- ຄະນະກວດກາສູນກາງພັກ ສົມທົບກັບ ຄະນະຈັດຕັ້ງສູນກາງພັກ ຊີ້ນຳ, ຊຸກຍູ້ ແລະ ຕິດຕາມຂັ້ນດຳເນີນຊີວິດການເມືອງ ຂອງອົງຄະນະພັກ ຢູ່ທ້ອງຖິ່ນ ແລະ ສູນກາງ;

- ຫ້ອງວ່າການສູນກາງພັກ ອອກຄຳແນະນຳ, ໂຄງຮ່າງ, ກຳນົດເນື້ອໃນ ແລະ ວິທີກະກຽມຮ່າງລາຍງານການເມືອງ ຂອງຄະນະພັກ ແຕ່ລະຂັ້ນ, ພ້ອມທັງລົງຕິດຕາມ, ຊຸກຍູ້ການກະກຽມຮ່າງລາຍງານການເມືອງດັ່ງກ່າວ ຂອງກະຊວງ-ອົງການ ແລະ ທ້ອງຖິ່ນ;

- ຄະນະໂຄສະນາອົບຮົມສູນກາງພັກ ອອກຄຳແນະນຳກຳນົດເນື້ອໃນໂຄສະນາສຶກສາອົບຮົມການເມືອງ-ແນວຄິດ, ປຸກລະດົມຂະບວນການ ແລະ ອອກຄຳແນະນຳ ໃນການຈັດຕັ້ງເຜີຍແຜ່ຮ່າງເອກະສານສຳຄັນຕ່າງໆ;

- ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງມະຫາຊົນ ເປັນເຈົ້າການໃນການປຸກລະດົມຂົນຂວາຍມະຫາຊົນ ແລະ ປະຊາຊົນ ບັນດາເຜົ່າ ເຂົ້າຮ່ວມຂະບວນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ ໃຫ້ເປັນຂະບວນການ ຟົດຟື້ນ.

**3.** ມອບໃຫ້ລັດຖະບານ ຊີ້ນຳບັນດາກະຊວງ-ອົງການ ທີ່ກ່ຽວຂ້ອງ ອອກຄຳແນະນຳ, ໂຄງຮ່າງ, ກຳນົດ

ເນື້ອໃນ, ວິທີກະກຽມຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາຂະແໜງການຂອງຄະນະພັກ ແຕ່ລະຂັ້ນ; ພ້ອມທັງລົງຕິດຕາມ, ຊຸກຍູ້ການກະກຽມຮ່າງດັ່ງກ່າວ ຂອງທ້ອງຖິ່ນ ແລະ ກະຊວງ-ອົງການ.

4. ມອບໃຫ້ລັດຖະບານ ຊີ້ນຳກະຊວງການເງິນ ຄົ້ນຄວ້າຈັດສັນງົບປະມານຮັບໃຊ້ກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງມະຫາຊົນ ຂັ້ນສູນກາງ.

5. ຄະນະພັກ ແຕ່ລະຂັ້ນ ໃຫ້ຮີບຮ້ອນຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍ ແລະ ອອກມະຕິຕົກລົງແຕ່ງຕັ້ງຄະນະຮັບຜິດຊອບລວມ, ອະນຸກຳມະການຊ່ວຍວຽກກະກຽມດຳເນີນກອງປະຊຸມໃຫຍ່ ຂັ້ນຂອງຕົນ; ຄົ້ນຄວ້າຂຶ້ນແຜນງົບປະມານ ແລະ ສ້າງແຜນການລະອຽດ ໃນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ ໃຫ້ທັນຕາມເວລາ ທີ່ກຳນົດໄວ້.

6. ອົງຄະນະພັກໃດ ສຳເລັດກອງປະຊຸມໃຫຍ່ແລ້ວ ຕ້ອງສະຫຼຸບຖອດຖອນບົດຮຽນ ແລະ ຮີບຮ້ອນຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມໃຫຍ່ ແຕ່ຫົວທີ ໃຫ້ເປັນຂະບວນຢ່າງກວ້າງຂວາງ ໃນໝູ່ມະຫາຊົນ ແນໃສ່ເຮັດໃຫ້ມະຕິກອງປະຊຸມໃຫຍ່ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ເກີດຜົນຕົວຈິງ.

7. ຜ່ານການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້, ຖ້າມີບັນຫາໃດ ບໍ່ຈະແຈ້ງ ຫຼື ພົບຄວາມຫຍຸ້ງຍາກ ໃຫ້ລາຍງານ ຕໍ່ຄະນະເລຂາທິການສູນກາງພັກ (ໂດຍຜ່ານອົງການເສນາທິການ ທີ່ກ່ຽວຂ້ອງ) ເພື່ອໃຫ້ການຊີ້ນຳທັນເວລາ.

8. ຄຳສັ່ງສະບັບນີ້ ປ່ຽນແທນຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 04/ຄລສພ, ລົງວັນທີ 07 ພຶດສະພາ 2018 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຕ. ຄະນະເລຂາທິການສູນກາງພັກ

ຜູ້ປະຈຳການ

ປອ ບຸນທອງ ຈິດມະນີ